ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----===000===----

ທະນາຄານແຫ່ງ ສປປ ລາວ ເລກທີ: 1078/ທຫລ
ນະຄອນຫຼວງວຽງຈັນ, ວັນທີ: 08 DEC 2016

# ຂໍ້ຕົກລົງ
## ວ່າດ້ວຍວິທີການກຳນົດ ແລະ ການເຜີຍແຜ່ ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນ ລະຫວ່າງທະນາຄານ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງຄະນະພັດທະນາຕະຫຼາດລະຫວ່າງທະນາຄານ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ກຳນົດວິທີການຄິດໄລ່ ແລະ ອະນຸຍາດເຜີຍແຜ່ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນເງິນຕາຈາກການດຳເນີນທຸລະກຳລະຫວ່າງທະນາຄານ ເພື່ອລິເລີ່ມສ້າງມາດຖານໃນການຈັດຕັ້ງປະຕິບັດ ແລະ ຊຸກຍູ້ການເຄື່ອນໄຫວຂອງຕະຫຼາດລະຫວ່າງທະນາຄານໃຫ້ນັບມື້ນັບຂະຫຍາຍຕົວ.

**ມາດຕາ 2 ປະເພດຂອງອັດຕາລະຫວ່າງທະນາຄານ**

ອັດຕາລະຫວ່າງທະນາຄານປະກອບດ້ວຍ: ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນເງິນຕາຕ່າງປະເທດ

**ມາດຕາ 3 ວິທີການຄິດໄລ່ອັດຕາດອກເບ້ຍລະຫວ່າງທະນາຄານ**

ອັດຕາດອກເບ້ຍລະຫວ່າງທະນາຄານ (Vientiane Interbank Offered Rate) ເອີ້ນຫຍໍ້ວ່າ Vibor ໝາຍເຖິງ ອັດຕາດອກເບ້ຍໃຫ້ກູ້ຢືມແກ່ທະນາຄານດ້ວຍກັນ, ໄດ້ມາຈາກການສະເລ່ຍຖ່ວງນ້ຳໜັກ (Weighted Average) ອັດຕາດອກເບ້ຍ ແລະ ບໍລິມາດການກູ້ຢືມ (ສຳລັບທຸລະກຳກູ້ຢືມ ແລະ ເງິນຝາກ)ໂດຍມີສູດຄິດໄລ່ດັ່ງນີ້:

$$W = \sum X_i^v \times \left(\frac{V_i}{T}\right)$$

$W$: ອັດຕາດອກເບ້ຍຖ່ວງນ້ຳໜັກ
$X_i^v$: ອັດຕາດອກເບ້ຍ ແຕ່ລະປະເພດ
$V_i$: ບໍລິມາດ ຫຼື ຈຳນວນເງິນກູ້ຢືມ/ເງິນຝາກ
$T$: ບໍລິມາດ ຫຼື ຈຳນວນເງິນທັງໝົດ/ເງິນຝາກ
$\sum$: ຜົນບວກ

**ມາດຕາ 4 ວິທີການຄິດໄລ່ອັດຕາແລກປ່ຽນເງິນຕາລະຫວ່າງທະນາຄານ**

ອັດຕາແລກປ່ຽນເງິນຕາລະຫວ່າງທະນາຄານ (Vientiane Interbank Offered Foreign Exchange Rate) ເອີ້ນຫຍໍ້ວ່າ Vifer ໝາຍເຖິງ ອັດຕາແລກປ່ຽນຊື້-ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານໄດ້ມາຈາກການສະເລ່ຍຖ່ວງນໍ້າໜັກອັດຕາຊື້ ຫຼື ອັດຕາຂາຍ (Weighted Average Bid and Ask Foreign Exchange Rate) ເຊິ່ງຈະໃຫ້ຄວາມສຳຄັນເປັນຕົວປ່ຽນໃນການຄິດອັດຕາແລກປ່ຽນ ແລະ ບໍລິມາດການ ຊື້-ຂາຍ ໂດຍມີສູດຄິດໄລ່ ດັ່ງນີ້:

$$W = \sum X^{v}_{Fx} \times \left(\frac{V_{Fx}}{T}\right)$$

$W$: ອັດຕາແລກປ່ຽນຖ່ວງນໍ້າໜັກ

$X^{v}_{Fx}$: ອັດຕາແລກປ່ຽນແຕ່ລະປະເພດ

$V_{Fx}$: ບໍລິມາດການແລກປ່ຽນ, ການຊື້-ຂາຍເງິນຕາຕ່າງປະເທດ

$T$: ບໍລິມາດ ຫຼື ຈຳນວນທັງໝົດ

$\sum$: ຜົນບວກ

**ມາດຕາ 5 ການນຳໃຊ້**

ຕະຫຼາດລະຫວ່າງທະນາຄານ ສາມາດນຳໃຊ້ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ ເປັນບ່ອນອີງ ໃນການພິຈາລະນາດຳເນີນທຸລະກຳເງິນຝາກ, ກູ້ຢືມ, ຊື້-ຂາຍເງິນຕາ ແລະ ທຸລະກຳອື່ນໆ ລະຫວ່າງທະນາຄານທຸລະກິດດ້ວຍກັນ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມບໍລິການທະນາຄານ ເຜີຍແຜ່ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນເງິນຕາ ລະຫວ່າງທະນາຄານຢ່າງເປັນປົກກະຕິປະຈຳວັນ ເທິງເວັບໄຊ້ຂອງ ທຫລ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ